

## ທ່ານສາມາດຊ່ວຍຄອບຄົວໃຫ້ຮັກສາເດັກນ້ອຍຂອງເຂົາເຈົ້າໃຫ້ປອດພັຍ

ພໍ່ແມ່ຮັກລູກຂອງເຂົາເຈົ້າ ແລະ ຢາກຮັກສາເຂົາເຈົ້າໃຫ້ປອດພັຍ. ບາງເທື່ອ, ການຜ່ານຜ່າບັນຫາຂອງຊີວິດເຮັດໃຫ້ຍາກສຳລັບຄອບຄົວທີ່ຈະຕອບສະນອງຄວາມຕ້ອງການຂອງລູກຂອງເຂົາເຈົ້າ. ພໍ່ແມ່ທີ່ມີຄວາມຕຶງຄຽດຄ້າຍຫລາຍກວ່າທີ່ຈະອິ່ມເຫັງ ຫລືປ່ອຍປະລະເລີຍລູກຂອງເຂົາເຈົ້າ. ເຂົາເຈົ້າອາດຈະບໍ່ຮູ້ຈັກວ່າຈະໄງຫນ້າໄປຫາໃຜເພື່ອການອູ້ມຊູຊ່ວຍເຫລືອ. ຄອບຄົວທີ່ອາສັຍຢູ່ຕາມຊຸມນຸມຊົນຂອງທ່ານຕ້ອງການຄວາມຊ່ວຍເຫລືອຂອງທ່ານນຳການຮັກສາລູກຂອງເຂົາເຈົ້າໃຫ້ປອດພັຍໃນເມື່ອເວລາຊີວິດຫຍຸ້ງຍາກຂຶ້ນ.

ເພື່ອຣາຍຣະອຽດເພີ້ມເຕີມ, ຈົ່ງຕິດຕໍ່ຫາ:

ໃຫ້ໃຊ້ເຄື່ອງຫມາຍ **QR** ແລະ ໂທຣະສັບມືຖືສະຫລາດຂອງທ່ານເພື່ອຈະເຂົ້າຫາໂດຍກົງໄປຫາແວບໄຊທ໌ຂອງ **FAR,** ຫລື ໄປທີ່:

www.dshs.wa.gov/ca/about/far.asp

Was ington State
Department of Social
& Health Services

DSHS 22-1508 LA (6/13)

# ມັນຈະຕ້ອງໄດ້ໃຊ້ຊຸມນຸມຊົນເພື່ອຈະຮັກສາເດັກນ້ອຍໃຫ້ປອດພັຍ

ທ່ານສາມາດຊ່ວຍພວກເຮົາກໍ່ສ້າງຊຸມນຸມຊົນທີ່ປອດພັຍສຳລັບເດັກນ້ອຍຂອງພວກເຮົາບໍ່?

ໂຄງການ Family Assessment Response (FAR) ຂອງຣັດວໍຊິງຕັນ



## ດ້ວຍການອູ້ມຊູຂອງຊຸມນຸມຊົນ, ເດັກນ້ອຍຫລາຍໆຄົນສາມາດປອດພັຍຢູ່ເຮືອນໄດ້

Family Assessment Response (ໂຄງການຕອບສະນອງຕໍ່ການຕີຣາຄາປະເມີນຜົນເບິ່ງຄອບຄົວ) (FAR) ອັນໃຫມ່ຂອງ Children's Administration (ຜະແນກປົກຄອງເດັກນ້ອຍ) ອະນຸຍາດໃຫ້ພວກເຮົາທີ່ຈະໃຊ້ການເຂົ້າຫາແບບຕ່າງເຖິງຄອບຄົວທີ່ມີການຖືກກ່າວຫາວ່າມີການຂົ່ມເຫັງ ຫລື ການປ່ອຍປະລະເລີຍເດັກນ້ອຍ. ບາງຄອບຄົວຈະຕ້ອງການການສືບສວນເພື່ອຈະຮັກສາເດັກນ້ອຍໃຫ້ປອດພັຍ. ຄອບຄົວອື່ນອາດຈະຕ້ອງການທີ່ຈະຕິດຕໍ່ຄືນນຳຊຸມນຸມຊົນ, ຄອບຄົວ ແລະ ຫມູ່ເພື່ອນຂອງເຂົາເຈົ້າ.

ຄອບຄົວທີ່ໄດ້ກ່ຽວພັນນຳຣະບົບຄວາມສຸກທຸກຂອງເດັກນ້ອຍຈະສູນເສັຽການການຕິດຕໍ່ພົວພັນເຫລົ່ານັ້ນສະເມີ. ເມື່ອຄອບຄົວໄດ້ຕິດຕໍ່ຄືນນຳຊຸມນຸມຊົນຂອງເຂົາເຈົ້າ, ບໍ່ພຽງແຕ່ວ່າເຂົາເຈົ້າຈະຮູ້ຈັກເພີ້ມເຕີມອີກກ່ຽວກັບການອູ້ມຊູ ແລະ ການບໍຣິການທີ່ມີໄວ້ໃຫ້ແກ່ເຂົາເຈົ້າ, ແຕ່ວ່າເຂົາເຈົ້າຈະກາຍເປັນຜູ້ມີສ່ວນເຮັດນຳຢູ່ໃນຊຸມນຸມຊົນໃນແບບທີ່ອູ້ມຊູຄົນອື່ນໆ.

ພວກເຮົາທັງຫມົດຫວັງເພິ່ງຄອບຄົວ ແລະ ຊຸມນຸມຊົນຂອງພວກເຮົາໃນເວລາມີບັນຫາ. ເມື່ອຄອບຄົວໄດ້ກໍ່ສ້າງຄວາມສັມພັນເຫລົ່ານີ້, ມັນຈະຊ່ວຍເຂົາເຈົ້າໃຫ້ຮັກສາເດັກນ້ອຍຂອງເຂົາເຈົ້າໃຫ້ປອດພັຍ.



*ການລົງທຶນໃນຄອບຄົວແມ່ນດີສຳລັບກິດຈະການຄ້າ.*

## ກິດຈະການຄ້າຕ່າງໆທັງໃຫຍ່ແລະນ້ອຍສາມາດຊ່ວຍເຫລືອຫລີກເວັ້ນການຂົ່ມເຫັງ ແລະ ການປ່ອຍປະລະເລີຍເດັກນ້ອຍ

**ຄອບຄົວຕ້ອງການຄວາມຊ່ວຍເຫລືອຂອງທ່ານນຳ:**

ການຮັກສາເຮືອນໃຫ້ປອດພັຍສຳລັບເດັກນ້ອຍຂອງເຂົາເຈົ້າ:

- ການສ້ອມແປງຣະບົບທໍ່ນ້ຳ
- ວຽກງານການໄຟຟ້າ
- ການເຮັດປະຕູເຂົ້າບ້ານ ແລະ ຮົ້ວບ້ານ
- ການຮັກສານ້ຳໄຟໃຫ້ມີຢູ່(ໄຟຟ້າ, ອາຍອຸ່ນ, ນ້ຳ, ນ້ຳເສັຽ, ຂີ້ເຫຍື້ອ, ໂທຣະສັບ)
- ເຄື່ອງເຟີນີເຈີ
- ອຸບປະກອນທຳຄວາມສະອາດ

**ການເຂົ້າເຖິງການບໍຣິການ ແລະ ເຄື່ອງອຸບປະກອນແນວອື່ນ:**

- ເຄື່ອງນຸ່ງແລະເກີບ
- ການສອນພິເສດຢູ່ໂຮງຮຽນ ແລະ ເຄື່ອງອຸບປະກອນ
- ເຮືອນຢູ່ອາສັຍທີ່ປອດພັຍ (ການຊອກຫາທາງເລືອກບ່ອນອາສັຍຢູ່ທີ່ປອດພັຍ ການຊ່ວຍເຫລືອຄ່າເຊົ່າເຮືອນ)
- ການຂົນສົ່ງໄປມາ
  ປີ້ຣົດບັສ
  ການສ້ອມແປງຣົດ
  ການຂີ່ຣົດໄປຫາຫມາຍນັດພົບພະຍາບານ
- ການບໍຣິການຂອງຜູ້ຊ່ຽວຊານ
- ການຮຽນຮູ້ວິຊາຊີວິດພື້ນຖານ (ການຊອກວຽກ, ຄວາມຊຳນານການລ້ຽງລູກ, ອາຫານການກິນ, ການຊອກຫາທ່ານຫມໍຜູ້ທີ່ຮັບເອົາບັດພະຍາບານ, ການຮັກສາເຮືອນທີ່ປອດພັຍ ແລະ ສະອາດ).

*ທ່ານສາມາດບໍຣິຈາກເວລາ ຫລື ຄວາມຊ່ຽວຊານຂອງທ່ານໄດ້ບໍ່ເພື່ອຈະຊ່ວຍຮັກສາເດັກນ້ອຍໃຫ້ປອດພັຍ?*



## ໂຄງການ Family Assessment Response (FAR) ຂອງຣັດວໍຊິງຕັນ

Children's Administration (ຜະແນກປົກຄອງເດັກນ້ອຍ) ກຳລັງນຳເຂົ້າມາໃຊ້ໂຄງການ Family Assessment Response (ໂຄງການຕອບສະນອງຕໍ່ການຕີຣາຄາປະເມີນຜົນເບິ່ງຄອບຄົວ) (FAR) ຢູ່ໃນຫ້ອງການທ້ອງຖິ່ນຣະຫວ່າງເດືອນແຈນຢູຣີ 2014 ແລະ ເດືອນຈຸນລາຍ 2016, ຕາມທີ່ເງິນທຶນອະນຸມັດໃຫ້. ຄອບຄົວທີ່ມີການຖືກກ່າວຫາເຣື່ອງການຂົ່ມເຫັງ ແລະ ການປ່ອຍປະລະເລີຍເດັກນ້ອຍ, ທີ່ບໍ່ໄດ້ຊີ້ບອກເຖິງການຂົ່ມຂູ່ຮ້າຍແຮງຕໍ່ອັນຕະລາຍຍິ່ງໃຫຍ່ຕໍ່ຄວາມປອດພັຍຮີບດ່ວນ ຫລື ດຳເນີນຕໍ່ໄປຂອງເດັກນ້ອ, ຈະມີເງື່ອນໄຂໄດ້ຮັບ FAR. ການຖືກກ່າວຫາຕ້ອງສອດຄ່ອງນຳການຕີຄວາມຫມາຍທາງກົດຫມາຍຂອງການຂົ່ມເຫັງ ແລະ ການປ່ອຍປະລະເລີຍເດັກນ້ອຍຢູ່ໃນກົດຫມາຍຂອງຣັດວໍຊິງຕັນ (RCW 26.44.020).

*ຄວາມປອດພັຍຂອງເດັກນ້ອຍຈະຢູ່ໃນຫົວໃຈຂອງວຽກງານຂອງພວກເຮົາສະເມີ.*

ເມື່ອກົມໄດ້ຮັບການຖືກກ່າວຫາເຣື່ອງການລ່ວງລ້ຳທາງເພດ ຫລື ການກົດຂີ່ຂົ່ມເຫັງທາງຮ່າງກາຍ ຫລື ການປ່ອຍປະລະເລີຍທີ່ຮ້າຍແຮງ, ຄອບຄົວຈະຖືກແຕ່ງຕັ້ງໃສ່ການສືບສວນຂອງ CPS ຕາມປະເພນີ.